ໜ່ວຍງານສາທາລະນະສຸກແລະບໍລິການມະນຸດ ລັດຄາລິຟໍເນຍ
**ພະແນກບໍລິການດ້ານພັດທະນາການ**
1215 O Street, Sacramento, CA 95814
www.dds.ca.gov

PETE CERVINKA
*ຮັກສາການຜູ້ອຳນວຍການ*

GAVIN NEWSOM
*ຜູ້ວ່າການລັດ*

# ຄຳຖາມທີ່ຖາມເລື້ອຍໆ (FAQs)
## ສາຂາການຄົ້ນຄວ້າ, ການກວດສອບ ແລະການປະເມີນຜົນ
## ໜ້າຈໍສະຫຼຸບຂໍ້ມູນສາທາລະນະທີ່ຄອບຄຸມ

ຄຳຖາມທີ່ຖາມເລື້ອຍໆຕໍ່ໄປນີ້ແມ່ນສະໜອງໃຫ້ເພື່ອຮອງຮັບການໃຊ້ງານໜ້າຈໍສະຫຼຸບຂໍ້ມູນສາທາລະນະແບບຄອບຄຸມ ເຊິ່ງສະໜອງຂໍ້ມູນຈຳນວນລູກຄ້າ ແລະຄ່າໃຊ້ຈ່າຍ.
ໜ້າຈໍສະຫຼຸບຂໍ້ມູນນີ້ຄຸ້ມຄອງຂໍ້ມູນທີ່ເປັນຄວາມລັບ ໂດຍສອດຄ່ອງກັບ ແນວທາງໃນການລະບຸຕົວຕົນຂອງພະແນກສາທາລະນະສຸກແລະບໍລິການມະນຸດຂອງລັດຄາລິຟໍເນຍ.

1. **ໜ້າຈໍສະຫຼຸບຂໍ້ມູນນີ້ແຕກຕ່າງຈາກລາຍງານການຈັດຊື້ບໍລິການປະຈຳປີ (POS) ແນວໃດ?**
   ຄວາມແຕກຕ່າງທີ່ສຳຄັນບາງຢ່າງໄດ້ແກ່:
   - ຊ່ວງເວລາ: ໜ້າຈໍສະຫຼຸບຂໍ້ມູນນີ້ແມ່ນໄດ້ຮັບການຈັດລຽງຕາມເດືອນແລະລວມປີງົບປະມານທັງໝົດ (FY) ນັບຕັ້ງແຕ່ປີງົບປະມານ 2011/12. ບົດລາຍງານ POS ປະຈຳປີຈະສະຫຼຸບຄັ້ງລະໜຶ່ງປີງົບປະມານ.
   - ຈຳນວນລູກຄ້າ:
     - ບົດລາຍງານ POS ປະຈຳປີໃຊ້ຊ່ວງເວລາ ໂດຍນັບບຸຄຄົນທີ່ມີສະຖານະໃຊ້ງານຢູ່ໃນເດືອນມັງກອນຂອງປີງົບປະມານ ຫຼືຢ່າງໜ້ອຍມີບັນທຶກ POS ໜຶ່ງລາຍການໃນປີງົບປະມານ.
     - ໜ້າຈໍສະຫຼຸບຂໍ້ມູນນີ້ສະແດງໃຫ້ເຫັນບຸຄຄົນທີ່ເຄີຍມີສະຖານະໃຊ້ງານໃນຊ່ວງໃດໆຂອງປີງົບປະມານ ຫຼືມີຄ່າໃຊ້ຈ່າຍ POS ໃນລະຫວ່າງປີງົບປະມານ.
   - ຂໍ້ມູນບາງຢ່າງໃນບົດລາຍງານ POS ປະຈຳປີແມ່ນບໍ່ມີຢູ່ໃນໜ້າຈໍສະຫຼຸບຂໍ້ມູນນີ້. ສິ່ງທີ່ໜ້າສັງເກດທີ່ສຸດແມ່ນຂໍ້ມູນທີ່ອະທິບາຍການນຳໃຊ້ການບໍລິການແລະການອະນຸຍາດ POS ເຊິ່ງສາມາດພົບເຫັນໄດ້ໃນບົດລາຍງານ POS ປະຈຳປີເທົ່ານັ້ນ.

2. **ຂ້າພະເຈົ້າຈະໃຊ້ໜ້າຈໍສະຫຼຸບຂໍ້ມູນນີ້ແນວໃດ?**
   - ຜູ້ໃຊ້ສາມາດເລືອກໄດ້ສູງສຸດເຖິງສອງຕົວກອງຢູ່ເບື້ອງຂວາຂອງໜ້າຈໍສະຫຼຸບຂໍ້ມູນນີ້. ຕົວເລືອກໄດ້ແກ່ ການມີສ່ວນຮ່ວມໃນໂຄງການ, ສູນເຣຈິນັລ, ກຸ່ມອາຍຸ, ເຊື້ອຊາດ/ຊາດພັນ, ພາສາຫຼັກ, ການວິນິດໄສ ແລະປະເພດທີ່ຢູ່ອາໄສ. ການຈຳກັດຕົວກອງສອງຕົວແມ່ນມີຄວາມຈຳເປັນເພື່ອຄຸ້ມຄອງຄວາມເປັນສ່ວນຕົວຂອງຂໍ້ມູນສ່ວນບຸຄຄົນ.
   - ຜູ້ໃຊ້ສາມາດເລືອກຊ່ວງເວລາສະເພາະໂດຍຄລິກໃສ່ເດືອນຫຼືປີງົບປະມານໃນຕາຕະລາງຢູ່ເບື້ອງຊ້າຍຂອງໜ້າຈໍສະຫຼຸບຂໍ້ມູນນີ້.

- ຕົວກອງທີ່ເລືອກທັງຫມົດຈະຖືກນຳໃຊ້ກັບໜ້າຈໍສະຫຼຸບຂໍ້ມູນທັງຫມົດ ລວມທັງກຣາຟທັງສາມອັນທີ່ສະແດງຢູ່ກາງຈໍສະແດງຜົນເຊັ່ນກັນ.

3. **ໜ້າຈໍສະຫຼຸບຂໍ້ມູນນີ້ປະກອບຂຶ້ນມາໄດ້ແນວໃດ?**
   ວິທີການທີ່ໃຊ້ໃນການສ້າງໜ້າຈໍສະຫຼຸບຂໍ້ມູນນີ້ສາມາດເບິ່ງໄດ້ໃນເອກະສານພາບລວມວິທີການ (Methodology Overview) ໃນ ເວັບໄຊຂອງໜ້າຈໍສະຫຼຸບຂໍ້ມູນນີ້.

4. **ມີຂໍ້ມູນໃດທີ່ຖືກຄັດອອກບໍ?**
   - ບັນທຶກຄ່າໃຊ້ຈ່າຍຕາມສັນຍາທີ່ບໍ່ກ່ຽວຂ້ອງກັບບຸຄຄົນໃດບຸຄຄົນໜຶ່ງຈະຖືກຄັດອອກ.
   - ບຸກຄົນໃດທີ່ມີຄ່າໃຊ້ຈ່າຍ POS ເຊິ່ງມີຂໍ້ມູນຂາດຫາຍໄປຈາກແຟ້ມລູກຄ້າຫຼັກສຳລັບເດືອນນັ້ນຈະຖືກຄັດອອກ.

5. **ຂ້າພະເຈົ້າຈະສາມາດຕິດຕໍ່ບຸຄຄົນໃດເພື່ອຂໍຄຳຄິດເຫັນ ແລະ/ຫຼືເພື່ອສອບຖາມເພີ່ມເຕີມ?**
   ກະລຸນາອີເມລຫາພວກເຮົາຖ້າທ່ານມີຄຳແນະນຳ ຫຼືພົບເຫັນບັນຫາຫຼືຂໍ້ຜິດພາດໃດໆ: Analytics@dds.ca.gov

6. **ຂ້າພະເຈົ້າຈະສາມາດບັນທຶກຂໍ້ມູນມຸມມອງປັດຈຸບັນຂອງຂ້າພະເຈົ້າ ຫຼືຫຼາຍມຸມມອງຂອງໜ້າຈໍສະຫຼຸບຂໍ້ມູນນີ້ສຳລັບການເຂົ້າເບິ່ງເວັບໄຊໃນອະນາຄົດໄດ້ບໍ?**
   ມຸມມອງແລະການຕັ້ງຄ່າໜ້າຈໍສະຫຼຸບຂໍ້ມູນນີ້ຖືກບັນທຶກໄວ້ໃນບຣາວເຊີຂອງຜູ້ໃຊ້ແຕ່ລະຄົນ. ເວັ້ນເສຍແຕ່ວ່າຈະລ້າງປະຫວັດການທ່ອງເວັບແລະການຄຸກກີ້ການຕິດຕາມລະຫວ່າງການເຂົ້າເບິ່ງ ໜ້າຈໍສະຫຼຸບຂໍ້ມູນນີ້ຈະສະແດງຕົວກອງດຽວກັນກັບທີ່ຖືກນຳໃຊ້ໃນການເຂົ້າເບິ່ງເວັບໄຊໜ້າຈໍສະຫຼຸບຂໍ້ມູນນີ້ຄັ້ງຫຼ້າສຸດ.

7. **ໜ້າຈໍສະຫຼຸບຂໍ້ມູນນີ້ໄດ້ຮັບການຣີເຟຣຊໃໝ່ເລື້ອຍໆປານໃດ? ເມື່ອມີການຣີເຟຣຊແລ້ວຜູ້ໃຊ້ຈະໄດ້ຮັບການແຈ້ງເຕືອນບໍ?**
   ໜ້າຈໍສະຫຼຸບຂໍ້ມູນນີ້ຈະໄດ້ຮັບການຣີເຟຣຊໃໝ່ທຸກໆເດືອນ. ຜູ້ໃຊ້ຈະບໍ່ໄດ້ຮັບການແຈ້ງເຕືອນເມື່ອໜ້າຈໍສະຫຼຸບຂໍ້ມູນນີ້ໄດ້ຮັບການອັບເດດ. ກະລຸນາເບິ່ງຄຳຖາມຕໍ່ໄປກ່ຽວກັບຕົວເລືອກໃນການສະໝັກຂໍຮັບຂໍ້ມູນ.

8. **ຂ້າພະເຈົ້າຈະສາມາດສະໝັກຂໍຮັບຂໍ້ມູນໜ້າຈໍສະຫຼຸບຂໍ້ມູນນີ້ໄດ້ບໍ? ຖ້າແມ່ນ ວິທີສະໝັກແມ່ນແນວໃດ?**
   ການສະໝັກຂໍຮັບຂໍ້ມູນເປັນວິທີການຮັບບົດລາຍງານ Power BI ທີ່ສົ່ງໃຫ້ທ່ານໂດຍອັດຕະໂນມັດຕາມກຳນົດເວລາທີ່ເລືອກ. ໜ້າຈໍສະຫຼຸບຂໍ້ມູນນີ້ບໍ່ສາມາດຮອງຮັບການແຈ້ງເຕືອນທາງອີເມວເມື່ອມີການອັບເດດຂໍ້ມູນ. ຢ່າງໃດກໍ່ຕາມ ຜູ້ໃຊ້ Power BI Pro, ເຈົ້າໜ້າທີ່ DDS, ແລະເຈົ້າໜ້າທີ່ສູນເຣຈິນັລທີ່ໄດ້ຮັບອະນຸຍາດສາມາດຕັ້ງຄ່າການສະໝັກຂໍຮັບຂໍ້ມູນໜ້າຈໍສະຫຼຸບຂໍ້ມູນ Power BI ໄດ້. ຕົວຢ່າງເຊັ່ນ ຖ້າຕ້ອງການໄດ້ຮັບບົດສະຫຼຸບຈຳນວນລູກຄ້າແລະຄ່າໃຊ້ຈ່າຍໃນວັນທີ 15

ຂອງທຸກເດືອນ
ທ່ານສາມາດສະໝັກຂໍຮັບແລະກຳນົດເວລາໃນການທີ່ຈະໄດ້ຮັບການແຈ້ງເຕືອນທາງອີເມວໄດ້. ວິທີນີ້ຈະເຮັດໃຫ້ແນ່ໃຈວ່າຂໍ້ມູນແລະການສະແດງຂໍ້ມູນດ້ວຍພາບຫຼ້າສຸດຈະຖືກສົ່ງໃຫ້ທ່ານໃນວັນທີ 15 ຂອງແຕ່ລະເດືອນ. ຂໍ້ກຳນົດແລະຄຳແນະນຳສຳລັບການຕັ້ງຄ່າການສະໝັກຂໍຮັບລາຍງານແມ່ນມີໃຫ້ໃນເວັບໄຊ ຂອງ Microsoft:

9. **ຂ້າພະເຈົ້າຈະສາມາດດາວໂຫລດຊຸດຂໍ້ມູນນີ້ເບື້ອງຫລັງໜ້າຈໍສະຫຼຸບຂໍ້ມູນນີ້ໄດ້ບໍ?**
ບໍ່ໄດ້. ເພື່ອຮັບປະກັນວ່າຂໍ້ມູນກ່ຽວກັບແຕ່ລະບຸຄຄົນຍັງຄົງປອດໄພ ຜູ້ໃຊ້ບໍ່ໄດ້ຮັບອະນຸຍາດໃຫ້ເບິ່ງ ຫຼືດາວໂຫລດຊຸດຂໍ້ມູນພື້ນຖານສຳລັບໜ້າຈໍສະຫຼຸບຂໍ້ມູນນີ້.